ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******************************

ອົງການໄອຍະການປະຊາຊົນສູງສຸດ — ເລກທີ...09.../ອອປສ.ຫກ

ຫ້ອງການ — ນະຄອນຫຼວງວຽງຈັນ, ວັນທີ...12/02.../2009

# ບົດແນະນຳ

## ຂອງຫົວໜ້າຫ້ອງການ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມ ວຽກງານໄອຍະການປະຊາຊົນທົ່ວປະເທດ ສຳລັບສົກປີ 2008-2009

==========================

**ຮຽນ : ທ່ານ ໄອຍະການທະຫານຂັ້ນສູງ, ຫົວໜ້າກົມ, ຫົວໜ້າຫ້ອງການ, ຫົວໜ້າສູນພັດທະນາວຽກງານໄອຍະການ, ໄອຍະການປະຊາຊົນຂັ້ນອຸທອນ 3 ພາກ, ໄອຍະການປະຊາຊົນນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນປະເທດ.**

- ອີງຕາມ ຜົນສຳເລັດຂອງກອງປະຊຸມວຽກງານໄອຍະການປະຊາຊົນທົ່ວປະເທດ ສົກປີ 2008-2009, ຄັ້ງວັນທີ 13-15/ 01/ 2009 .

ປະຕິບັດຕາມການຊີ້ນຳຂອງທ່ານໄອຍະການປະຊາຊົນສູງສຸດ, ຫ້ອງການໄອຍະການປະຊາຊົນສູງສຸດ ໄດ້ມີບົດແນະນຳຄືດັ່ງລຸ່ມນີ້ :

## I. ຈຸດປະສົງລະດັບຄາດໝາຍ

1. ເພື່ອເຮັດໃຫ້ ອົງການໄອຍະການປະຊາຊົນ ແລະ ອົງການໄອຍະການທະຫານແຕ່ລະຂັ້ນໃນທົ່ວປະເທດ ມີຄວາມຮັບຮູ້ເຂົ້າໃຈ ແລະ ມີຄວາມສາມາດຈັດຕັ້ງຜັນຂະຫຍາຍ, ຈຸດປະສົງ, ຄາດໝາຍ ແລະ ເນື້ອໃນຂອງບັນດາແຜນງານ, ໂຄງການລວມທົ່ວປະເທດທີ່ໄດ້ຮັບຮອງເອົາໃນກອງປະຊຸມວຽກງານໄອຍະການປະຊາຊົນທົ່ວປະເທດ ສົກປີ 2008-2009 ໃຫ້ປະກົດເປັນຈິງ.

2. ມີຄວາມເປັນເອກະພາບກັນລະຫ່ວາງ ອົງການໄອຍະການແຕ່ລະຂັ້ນ ໃນການປະຕິບັດລະບອບປະສານງານ ແລະ ລາຍງານສ່ອງແສງໃຫ້ຂັ້ນເທິງເປັນປົກກະຕິ.

## II. ວິທີການຈັດຕັ້ງຜັນຂະຫຍາຍ

ເພື່ອເຮັດໃຫ້ຈຸດໝາຍ, ຄາດໝາຍ, ບັນດາແຜນງານ ແລະ ໂຄງການລວມທີ່ໄດ້ວາງອອກໃນສົກປີ 2008-2009 ໄດ້ຮັບການຈັດຕັ້ງປະຕິບັດຕົວຈິງ, ຫ້ອງການໄອຍະການປະຊາຊົນສູງສຸດ ຂໍມອບບັນດາແຜນງານ ແລະ ໂຄງການໃຫ້ແຕ່ລະພາກສ່ວນ ຜັນຂະຫຍາຍຈັດຕັ້ງປະຕິບັດຄືດັ່ງລຸ່ມນີ້ :

1. **ແຜນງານທີ1: ແຜນງານຍົກສູງຄຸນນະພາບການຕິດຕາມກວດກາການປະຕິບັດກົດໝາຍ.**

ແຜນງານນີ້ໃນສົກປີ 2008-2009 ໄດ້ກຳນົດໄວ້ມີ 6 ໂຄງການ ຄືດັ່ງນີ້ :

1.1. **ໂຄງການທີ 1 : ໂຄງການຕິດຕາມກວດກາທົ່ວໄປ**

ມອບໃຫ້ກົມກວດກາທົ່ວໄປ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດ ເພື່ອໃຫ້ຮັບປະກັນບັນລຸເປົ້າໝາຍຂອງໂຄງການນີ້ກົມກວດກາທົ່ວໄປ ຈະຕ້ອງເອົາໃຈໃສ່ປະຕິບັດບັນດາກິດຈະກຳດັ່ງນີ້ :

- ກິດຈະກຳການປັບປຸງຂໍ້ກຳນົດວ່າດ້ວຍພາລະບົດບາດ, ສິດໜ້າທີ່ ຂອງກົມກວດກາທົ່ວໄປ ແລະ ຂະແໜງກວດກາທົ່ວໄປຢູ່ທ້ອງຖິ່ນ.
- ກິດຈະກຳການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງໃຫ້ໄດ້ 100%.
- ກິດຈະກຳລົງກວດກາ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຢູ່ພາຍໃນລະບົບອົງການໄອຍະການປະຊາຊົນ.
- ກິດຈະກຳລົງເກັບກຳຂໍ້ມູນດ້ານອາຊະຍາກຳຢູ່ທ້ອງຖິ່ນ.
- ກິດຈະກຳລົງຕິດຕາມກວດກາການລະເມີດກົດໝາຍທີ່ມີທາງສຽງພົ້ນເດັ່ນ.

1.2. **ໂຄງການທີ 2 : ໂຄງການຕິດຕາມກວດກາອົງການສືບສວນ-ສອບສວນ**

ພາກສ່ວນທີ່ກ່ຽວຂ້ອງຈະໄດ້ຈັດຕັ້ງປະຕິບັດໂຄງການດັ່ງກ່າວນີ້ມີຄື:

- ກົມກວດກາຄະດີອາຍາ ຂອງອົງການໄອຍະການປະຊາຊົນສູງສຸດ.
- ພະແນກກວດກາຄະດີອາຍາ ຂອງບັນດາອົງການໄອຍະການປະຊາຊົນຂັ້ນອຸທອນພາກ.
- ພະແນກກວດກາຄະດີອາຍາ ຂອງອົງການໄອຍະການທະຫານຂັ້ນສູງ.
- ຂະແໜງກວດກາຄະດີອາຍາ ຂອງອົງການໄອຍະການປະຊາຊົນນະຄອນຫຼວງ ແລະ ບັນດາແຂວງ, (ສຳລັບທະຫານ ແມ່ນກອງພົນ ກອງພັນໃຫຍ່ ແລະ ກອງບັນຊາການທະຫານແຂວງ, ນະຄອນຫຼວງ).

ໃຫ້ພາກສ່ວນດັ່ງກ່າວເທິງນີ້ສ້າງໂຄງການຕິດຕາມກວດກາອົງການສືບສວນ-ສອບສວນ ໂດຍແທດເໝາະກັບສະພາບຕົວຈິງຄື:

1.2.1. ກົມກວດກາຄະດີອາຍາ ອົງການໄອຍະການປະຊາຊົນສູງສຸດ ຕ້ອງສ້າງໂຄງການຕິດຕາມກວດກາອົງການສືບສວນ-ສອບສວນ ເຊິ່ງມີບັນດາກິດຈະກຳຄື:

+ ກິດຈະກຳການອອກນິຕິກຳ ຫຼື ຄຳແນະນຳໃນການຕິດຕາມກວດກາ ອົງການສືບສວນ-ສອບສວນ ໂດຍສະເພາະແມ່ນກຳນົດວິທີການຕິດຕາມກວດກາອົງການສືບສວນ-ສອບສວນ ແຕ່ທົ່ວທີ.

+ ກິດຈະກຳລົງເກັບກຳຂໍ້ມູນຄະດີຕາມປະເດັນ ທີ່ອົງການໄອຍະການຂັ້ນເທິງສັ່ງໃຫ້.

+ ກິດຈະກຳການຈັດໄປຖອດຖອນບົດຮຽນໃນການຕິດຕາມກວດກາ ການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ລະຫວ່າງບັນດາແຂວງຕ່າງໆ.

1.3.2. <u>ໂຄງການຕິດຕາມກວດກາການປະຕິບັດກົດໝາຍໃນການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ເດັດຂາດ</u>

ໂຄງການນີ້ມອບຄວາມຮັບຜິດຊອບໃຫ້ພາກສ່ວນຕ່າງໆ ປະຕິບັດຄືດັ່ງນີ້ :

1- ມອບໃຫ້ກົມກວດກາທົ່ວໄປ ຂອງອົງການໄອຍະການປະຊາຊົນສູງສຸດ ແລະ ຂະແໜງກວດກາທົ່ວໄປ ຂອງອົງການໄອຍະການປະຊາຊົນແຂວງ ແລະ ນະຄອນຫຼວງ ເປັນຜູ້ຕິດຕາມກວດກາການປະຕິບັດກົດໝາຍໃນການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ເດັດຂາດ ທີ່ກ່ຽວກັບຄະດີແພ່ງ ໂດຍຈະຕ້ອງໄດ້ສ້າງໂຄງການຕິດຕາມກວດກາ ການປະຕິບັດກົດໝາຍໃນການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ເດັດຂາດ ເຊິ່ງລວມມີບັນດາກິດຈະກຳຄືດັ່ງນີ້ :

+ ກິດຈະກຳການລົງຕິດຕາມເກັບກຳຂໍ້ມູນ ການປະຕິບັດຄຳຕັດສິນຂອງສານ ຂອງກົມຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງກະຊວງຍຸຕິທຳ, ບັນດາຫ້ອງການປະຕິບັດຄຳຕັດສິນຂອງສານຂອງບັນດາພະແນກຍຸຕິທຳແຂວງ ແລະ ນະຄອນຫຼວງ ຕາມເປົ້າໝາຍຂອງໂຄງການທີ່ໄດ້ກຳນົດໄວ້ໃນແຜນການສົກປີ 2008-2009 .

+ ກິດຈະກຳເປີດກອງປະຊຸມຮ່ວມກັບບັນດາພາກສ່ວນທີ່ກ່ຽວຂ້ອງ ແນ່ໃສ່ແນະນຳໃຫ້ປະຕິບັດກົດໝາຍໃຫ້ຖືກຕ້ອງ ໂດຍສະເພາະແມ່ນການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ເດັດຂາດ, ພ້ອມກັນຄົ້ນຄວ້າຊອກຫາວິທີການ ເພື່ອແກ້ໄຂບັນດາຄະດີທີ່ບໍ່ສາມາດປະຕິບັດໄດ້ ຫຼື ມີຄຳຮ້ອງຂໍຄວາມເປັນທຳຈາກຄູ່ຄວາມ.

2- ມອບໃຫ້ກົມກວດກາຄ້າຍຄຸມຂັງ-ດັດສ້າງ ຂອງອົງການໄອຍະການປະຊາຊົນສູງສຸດ ແລະ ຂະແໜງກວດກາຄ້າຍດັດສ້າງຂອງແຂວງ ແລະ ນະຄອນຫຼວງ ເປັນຜູ້ກວດກາການປະຕິບັດຄຳຕັດສິນຂອງສານກ່ຽວກັບຄະດີອາຍາ ຫຼື ຄະດີອາຍາຕິດແພ່ງ ເຊິ່ງກົມກວດກາຄ້າຍຄຸມຂັງ-ດັດສ້າງ ຕ້ອງໄດ້ສ້າງໂຄງການຕິດຕາມກວດກາການປະຕິບັດກົດໝາຍ ໃນການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ເດັດຂາດ ເຊິ່ງລວມມີບັນດາກິດຈະກຳຄືດັ່ງນີ້ :

- ກິດຈະກຳການລົງຕິດຕາມເກັບກຳຂໍ້ມູນ ການປະຕິບັດຄຳຕັດສິນຂອງສານຂອງພາກສ່ວນທີ່ກ່ຽວຂ້ອງຕາມເປົ້າໝາຍຂອງໂຄງການທີ່ໄດ້ກຳນົດໄວ້ໃນແຜນການ ສົກປີ 2008-2009 .

- ກິດຈະກຳເປີດກອງປະຊຸມຮ່ວມກັບບັນດາພາກສ່ວນທີ່ກ່ຽວຂ້ອງ ແນ່ໃສ່ແນະນຳໃຫ້ປະຕິບັດກົດໝາຍໃຫ້ຖືກຕ້ອງ ໂດຍສະເພາະແມ່ນການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ເດັດຂາດ, ພ້ອມກັນຄົ້ນຄວ້າຊອກຫາວິທີການເພື່ອແກ້ໄຂບັນດາຄະດີທີ່ບໍ່ສາມາດປະຕິບັດໄດ້ ຫຼື ມີຄຳຮ້ອງຂໍຄວາມເປັນທຳຂອງຄູ່ຄວາມ.

1.3.3. <u>ໂຄງການທີ 4 : ໂຄງການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານ</u>

ມອບໂຄງການນີ້ໃຫ້ກົມກວດກາຄ້າຍຄຸມຂັງ-ດັດສ້າງ ເປັນຜູ້ປະສານງານສ້າງໂຄງການນີ້ ເພື່ອໃຫ້ບັນລຸເປົ້າໝາຍຂອງໂຄງການ ໃນນັ້ນຕ້ອງເລັ່ງໃສ່ບັນດາກິດຈະກຳດັ່ງນີ້ :

\+ ກິດຈະກຳລົງເກັບກຳຂໍ້ມູນການປະຕິບັດກົດໝາຍ ໃນບັນດາສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານ.

\+ ກິດຈະກຳການຈັດກອງປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອແກ້ໄຂບັນຫາຕ່າງໆທີ່ບໍ່ຖືກຕ້ອງຕາມກົດໝາຍໃນການປະຕິບັດຕໍ່ພວກຕ້ອງຫາ ແລະ ນັກໂທດ.

\+ ກິດຈະກຳການອອກຂໍ້ຕົກລົງ ຫຼື ແນະນຳຕ່າງໆ ກ່ຽວກັບການປະຕິບັດກົດໝາຍຢູ່ໃນສະຖານນກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນໆຂອງສານ.

\+ ກິດຈະກຳການຄົ້ນຄ້ວາອະໄພຍະໂທດໃຫ້ແກ່ນັກໂທດ.

1.3.4. <u>ໂຄງການທີ 5 : ໂຄງການສ້າງ ແລະ ປັບປຸງນິຕິກຳ</u>

ໂຄງການທີ 5 ນີ້ ແມ່ນມອບຄວາມຮັບຜິດຊອບໃຫ້ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ ຄື :

1- ການຂຽນຮ່າງມະຕິຂອງກົມການເມືອງສູນກາງພັກ ກ່ຽວກັບວຽກງານໄອຍະການ ແລະ ສານປະຊາຊົນ ໃຫ້ຄະນະສະເພາະກິດທີ່ໄດ້ຮັບການແຕ່ງຕັ້ງແລ້ວເປັນຜູ້ຮັບຜິດຊອບ.

2- ມອບໃຫ້ກົມຈັດຕັ້ງ-ພະນັກງານເປັນຜູ້ຮ່າງຂໍ້ຕົກລົງ ຂອງໄອຍະການປະຊາຊົນສູງສຸດ ກ່ຽວກັບການແຕ່ງຕັ້ງຮ່າງບົດການປັບປຸງກົດໝາຍ ວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ ແລະ ມອບໃຫ້ຄະນະສະເພາະກິດນີ້ກະກຽມເພື່ອສະເໜີໃຫ້ຄະນະປະຈຳສະພາແຫ່ງຊາດ.

3- ມອບໃຫ້ກົມກວດກາຄ້າຍຄຸມຂັງ-ດັດສ້າງ ເປັນຜູ້ສືບຕໍ່ປັບປຸງຮ່າງລັດຖະບັນຍັດວ່າດ້ວຍວຽກງານອະໄພຍະໂທດ.

4- ມອບໃຫ້ກົມຈັດຕັ້ງ-ພະນັກງານ ເປັນຜູ້ສ້າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍພະນັກງານສອບສວນ.

5- ມອບໃຫ້ອົງການໄອຍະການທະຫານຂັ້ນສູງ ເປັນຜູ້ສ້າງຮ່າງກົດໝາຍວ່າດ້ວຍອົງການໄອຍະການທະຫານ.

6- ມອບໃຫ້ກົມຈັດຕັ້ງ-ພະນັກງານ ສ້າງຄຳແນະນຳຈັດຕັ້ງຜັນຂະຫຍາຍເນື້ອໃນຄຳຂວັນ 3 ມີ 4 ຮັບປະກັນ ທີ່ໄດ້ຮັບຮອງເອົາໃນກອງປະຊຸມປະຈຳສົກປີ 2008-2009 ເພື່ອສ້າງຂະບວນການແຂ່ງຂັນສ້າງຜົນງານຕາມເນື້ອໃນຄຳຂວັນດັ່ງກ່າວ ເພື່ອແນ່ໃສ່ຂ່ຳນັບຮັບຕ້ອນກອງປະຊຸມ 4 ພາກສ່ວນ, ວັນສ້າງຕັ້ງອົງການໄອຍະການປະຊາຊົນ ຄົບຮອບ 20 ປີ (ວັນທີ 9 ມັງກອນ 1990 - 9 ມັງກອນ 2010), ກອງປະຊຸມວຽກງານໄອຍະການປະຊາຊົນທົ່ວປະເທດ ປະຈຳສົກປີ 2009-2010.

1.3.5. <u>ໂຄງການທີ 6 : ໂຄງການສ້າງ ແລະ ປັບປຸງຂໍ້ມູນຂ່າວສານ</u>

ມອບໂຄງການສ້າງ ແລະ ປັບປຸງຂໍ້ມູນຂ່າວສານ ໃຫ້ຫ້ອງການໄອຍະການປະຊາຊົນສູງສຸດ ເປັນຜູ້ປະຕິບັດ.

2. <u>ແຜນງານທີ 2 : ແຜນງານພັດທະນາບຸກຄະນະກອນ, ການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານ</u>

ແຜນງານນີ້ລວມມີ 6 ໂຄງການ ໂດຍມອບໃຫ້ແຕ່ລະພາກສ່ວນຮັບຜິດຊອບ ຄື :

1- ມອບໂຄງການຍົກລະດັບທິດສະດີດ້ານການເມືອງ-ການປົກຄອງ ແລະ ວິຊາການ ໃຫ້ກົມຈັດຕັ້ງ-ພະນັກງານ ແລະ ສູນພັດທະນາວຽກງານໄອຍະການເປັນຜູ້ຮັບຜິດຊອບ :

+ ກົມຈັດຕັ້ງ-ພະນັກງານເປັນຜູ້ປະສານງານກັບບັນດາພາກສ່ວນທີ່ກ່ຽວຂ້ອງ ເພື່ອຄັດເລືອກເອົາເປົ້າໝາຍມາຍົກລະດັບທິດສະດີການເມືອງ-ການປົກຄອງ ຕາມແຕ່ລະປະເພດຄື : ຍົກລະດັບ 5 ເດືອນທີ່ສະຖາບັນການເມືອງ-ການປົກຄອງແຫ່ງຊາດ, ຍົກລະດັບທິດສະດີການເມືອງ-ການປົກຄອງ 45 ວັນທີ່ສູນພັດທະນາ, ຍົກລະດັບວິຊາການໄລຍະສັ້ນທີ່ສູນພັດທະນາວຽກງານໄອຍະການ. ການຄັດເລືອກພະນັກງານຕ້ອງຮັບປະກັນໃຫ້ແຜນການກໍ່ສ້າງພະນັກງານ ໃຫ້ມີການສືບທອດຕໍ່ເນື່ອງ ໃນນັ້ນຕ້ອງເລັ່ງໜັກເພື່ອສ້າງໃຫ້ພະນັກງານມີລະດັບທິດສະດີການເມືອງ-ການປົກຄອງໜັກແໜ້ນ, ມີຄວາມສຳນານດ້ານວິຊາການ, ມີຄວາມສາມາດເຊື່ອມໂຍງກັບສາກົນໄດ້.

+ ສູນພັດທະນາວຽກງານໄອຍະການ ເປັນຜູ້ປະສານງານກັບສະຖາບັນການເມືອງ-ການປົກຄອງແຫ່ງຊາດ, ບັນດາກົມວິຊາການ ຂອງອົງການໄອຍະການປະຊາຊົນສູງສຸດ ເພື່ອສ້າງໂຄງການຫຼັກສູດໃຫ້ເໝາະສົມກັບເປົ້າໝາຍທີ່ຈະມາຍົກລະດັບ.

2- ມອບໂຄງການປັບປຸງກົງຈັກການຈັດຕັ້ງ ຂອງອົງການໄອຍະການປະຊາຊົນແຕ່ລະຂັ້ນ ໃຫ້ແກ່ກົມຈັດຕັ້ງ-ພະນັກງານເປັນຜູ້ປະຕິບັດໂຄງການນີ້ ເຊິ່ງລວມມີກິດຈະກຳຄື :

+ ກິດຈະກຳການລົງເກັບກຳຂໍ້ມູນດ້ານພະນັກງານ ຢູ່ອົງການໄອຍະການແຕ່ລະຂັ້ນ, ໂດຍສະເພາະແມ່ນຂັ້ນເມືອງ.

+ ກິດຈະກຳສ້າງແຜນການປັບປຸງການຈັດຕັ້ງ ອົງການໄອຍະການປະຊາຊົນແຕ່ລະຂັ້ນຕາມການຊີ້ນຳຂອງຄະນະນຳ ອົງການໄອຍະການປະຊາຊົນສູງສຸດ.

+ ກິດຈະກຳສອບຄັດເລືອກເອົາລັດຖະກອນໃໝ່.

ຫ້ອງການໄອຍະການປະຊາຊົນສູງສຸດ ຮັບຜິດຊອບບັນດາໂຄງການດັ່ງນີ້ :

3- ມອບໂຄງການປັບປຸງສູນພັດທະນາວຽກງານໄອຍະການ ໃຫ້ແກ່ຄະນະຈັດຊື້ຂອງອົງການໄອຍະການປະຊາຊົນສູງສຸດ ແລະ ສູນພັດທະນາວຽກງານໄອຍະການເປັນຜູ້ປະຕິບັດ.

4- ມອບໂຄງການຄຸ້ມຄອງສະໜອງງົບປະມານ, ພາຫານະ ແລະ ອຸປະກອນ ໃຫ້ແກ່ຫ້ອງການ ອອປສ ເປັນຜູ້ປະຕິບັດ.

5- ມອບໂຄງການປັບປຸງ ແລະ ສະໜອງເຄື່ອງແບບ, ກາໝາຍ ຂອງພະນັກງານໄອຍະການໃຫ້ແກ່ຫ້ອງການ ອອປສ ເປັນຜູ້ປະຕິບັດ.

6- ມອບໂຄງການປັບປຸງ ແລະ ຍົກລະດັບຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນຢູ່ ອົງການໄອຍະການປະຊາຊົນ ແລະ ອົງການໄອຍະການປະຊາຊົນຂັ້ນອຸທອນພາກກາງ ໃຫ້ແກ່ຮາກຖານ ກຳມະບານ ອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ປະຕິບັດ. ສະເພາະຢູ່ອົງການໄອຍະການ ປະຊາຊົນຂັ້ນອຸທອນພາກເໜືອ, ພາກໃຕ້, ອົງການໄອຍະການປະຊາຊົນນະຄອນຫຼວງ, ບັນດາແຂວງໃນ ທົ່ວປະເທດ ແມ່ນມອບໃຫ້ຄະນະນຳ ອົງການໄອຍະການປະຊາຊົນຂັ້ນດັ່ງກ່າວເປັນຜູ້ຄົ້ນຄ້ວາ ໃນການ ຈັດຕັ້ງປະຕິບັດໂຄງການດັ່ງກ່າວນີ້.

3. **<u>ແຜນງານທີ 3 : ແຜນງານກໍ່ສ້າງໂຄງລ່າງ</u>**

ແຜນງານນີ້ລວມມີ 3 ໂຄງການເຊິ່ງຈະໄດ້ມອບໃຫ້ພາກສ່ວນຕ່າງໆ ຈັດຕັ້ງປະຕິບັດຄື:

1- ມອບໃຫ້ຫ້ອງການໄອຍະການປະຊາຊົນສູງສຸດ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການ ຈັດຕັ້ງປະຕິບັດບັນດາໂຄງການຕ່າງໆທີ່ມີຢູ່ໃນແຜນງານນີ້ ເຊິ່ງລວມມີບັນດາໂຄງການຄື: ໂຄງການ ກໍ່ສ້າງຫ້ອງການແຂວງວຽງຈັນ, ກໍ່ສ້າງເຮືອນພັກພະນັກງານ ຂອງອົງການໄອຍະການປະຊາຊົນຂັ້ນ ອຸທອນພາກເໜືອ, ສ້ອມແປງຫ້ອງການອົງການໄອຍະການປະຊາຊົນຂັ້ນອຸທອນພາກໃຕ້, ໂຄງການສ້ອມ ແປງສູນພັດທະນາ.

4. **<u>ແຜນງານທີ 4 : ແຜນງານຮ່ວມມືກັບຕ່າງປະເທດ</u>**

1- ມອບໃຫ້ຫ້ອງການໄອຍະການປະຊາຊົນສູງສຸດ ເປັນຜູ້ປະສານສົມທົບກັບອົງການໄອຍະການ ປະຊາຊົນບັນດາປະເທດ ແລະ ອົງການຈັດຕັ້ງສາກົນ, ບັນດາອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ 3 ໂຄງການ ໃນແຜນງານຮ່ວມມືກັບຕ່າງປະເທດ ພາຍໃຕ້ການ ຊີ້ນຳຂອງໄອຍະການປະຊາຊົນສູງສຸດ ໂດຍກົງ.

## III. <u>ບາງບັນຫາທີ່ຕ້ອງເອົາໃຈໃສ່</u>

1- ແຜນງານ, ໂຄງການ ແລະ ກິດຈະກຳຕ່າງໆ ທີ່ໄດ້ມອບໃຫ້ແຕ່ລະພາກສ່ວນຮັບຜິດຊອບນີ້ ແມ່ນວຽກງານຕົ້ນຕໍທີ່ຈະໄດ້ປະຕິບັດໃນປີ 2009 ນີ້. ດັ່ງນັ້ນ, ແຕ່ລະພາກສ່ວນຕ້ອງກວດກາແຜນການ 2008-2009 ຂອງຕົນຄືນ, ຖ້າຫາກຍັງບໍ່ທັນໄດ້ຂຽນວຽກເຂົ້າຕ້ອງໄດ້ປັບປຸງ. ນອກຈາກແຜນການລວມ ແລ້ວຕ້ອງໄດ້ສ້າງເປັນໂຄງການ ເປັນກິດຈະກຳຂອງຕົນ ແລະ ໃຫ້ເອົາໃຈໃສ່ບາງຈຸດໃຈດັ່ງລຸ່ມນີ້ :

+ ການສ້າງແຜນງານ ແລະ ໂຄງການ ຕ້ອງມີຄວາມດຸ່ນດ່ຽງ ໝາຍວ່າເວລາສ້າງແຜນງານ ແລະ ໂຄງການຕ້ອງຮັບປະກັນດ້ານແຜນວຽກ, ແຜນຄົນ, ແຜນເງິນ, ກຳນົດເວລາ ໂດຍສະເພາະແມ່ນແຜນເງິນ ເພື່ອຮອງຮັບການຈັດຕັ້ງປະຕິບັດໂຄງການດັ່ງກ່າວ, ບາງໂຄງການ ບາງກິດຈະກຳ ອາດຈະປະຕິບັດສຳ ເລັດໃນປີນີ້ ແຕ່ບາງໂຄງການອາດຈະໃຊ້ເວລາຫຼາຍປີ.

+ ແຜນງານ, ໂຄງການ ຕ້ອງໃຫ້ມີລັກສະນະວິຊາການ ວິທະຍາສາດ ແລະ ຕົວຈິງ ; ແຜນງານ ແລະ ໂຄງການ ຕ້ອງມີການສ້າງຕາມຫຼັກວິຊາການ ດ້ານການສ້າງແຜນງານ ແລະ ໂຄງການ ທີ່ກະຊວງ ແຜນການ ແລະ ການລົງທຶນປະກາດໃຊ້ ; ແຜນງານ ແລະ ໂຄງການ ຕ້ອງໄດ້ມີການປະເມີນຜົນໃຫ້ ລະອຽດ : ຄວາມສອດຄ່ອງ, ຜົນໄດ້ຮັບ, ຜົນກະທົບ ແລະ ອື່ນ ໆ .

2- ເອົາໃຈໃສ່ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃນຂົງເຂດຍຸຕິທຳ, ຂອດການຂໍຄຳເຫັນຊີ້ນຳຈາກຄະນະປະສານງານປົກປ້ອງກົດໝາຍ, ຂໍຄຳເຫັນຈາກຄະນະພັກຂັ້ນຂອງຕົນ ເພື່ອເຮັດໃຫ້ແຜນງານ ແລະ ໂຄງການ ມີຄວາມເໝາະສົມກັບສະພາບຕົວຈິງ ແລະ ໄດ້ຮັບຜົນດີໃນການຈັດຕັ້ງປະຕິບັດ.

3- ຕ້ອງມີການຊຸກຍູ້ກວດກາ ແລະ ປະເມີນຜົນໃນການປະຕິບັດແຜນງານ ແລະ ໂຄງການ ເປັນແຕ່ລະໄລຍະ, ຜ່ານການຈັດຕັ້ງປະຕິບັດຕົວຈິງ ຖ້າເຫັນວ່າໂຄງການບໍ່ສາມາດຈັດຕັ້ງປະຕິບັດໄດ້ ຕ້ອງມີການດັດປັບໃຫ້ທັນການ.

4- ສ້າງໂຄງການ, ກິດຈະກຳ ຕ້ອງໄດ້ສົ່ງ 1 ຊຸດໃຫ້ຫ້ອງການ ອົງການໄອຍະການປະຊາຊົນສູງສຸດ ເພື່ອສັງລວມລາຍງານຕໍ່ຄະນະນຳ ອອປສ.

## IV. ວິທີຈັດຕັ້ງປະຕິບັດ.

1- ເມື່ອໄດ້ຮັບຄຳແນະນຳນີ້ແລ້ວ ໄອຍະການທະຫານຂັ້ນສູງ, ຫົວໜ້າກົມ, ຫົວໜ້າຫ້ອງການ, ຫົວໜ້າສູນພັດທະນາວຽກງານໄອຍະການ, ໄອຍະການປະຊາຊົນຂັ້ນອຸທອນ 3 ພາກ, ອົງການໄອຍະການນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນທົ່ວປະເທດ ພ້ອມກັນຄົ້ນຄ້ວາເຊື່ອມຊຶມເນື້ອໃນດັ່ງກ່າວ ເພື່ອຈັດຕັ້ງເຜີຍແຜ່ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ທຸກຄົນເຊື່ອມຊຶມກຳແໜ້ນ ແລະ ເປັນເຈົ້າການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ປະກົດເປັນຈິງ.

2- ຫ້ອງການ ອອປສ ຈະເປັນຜູ້ປະສານສົມທົບຊຸກຍູ້ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ໃຫ້ເປັນປົກກະຕິ, ມີການສະຫລຸບລາຍງານສະພາບການການຈັດຕັ້ງຕໍ່ຄະນະພັກ, ຄະນະນຳ ອົງການໄອຍະການປະຊາຊົນສູງສຸດ ຕາມແຕ່ລະໄລຍະ 1 ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ. ຜ່ານການຈັດຕັ້ງປະຕິບັດຕົວຈິງຖ້າມີບັນຫາ ຕ້ອງລາຍງານຂໍຄວາມເຫັນຈາກຂັ້ນເທິງເປັນປົກກະຕິ.

**ຫົວໜ້າຫ້ອງການ**

ອົງການໄອຍະການປະຊາຊົນສູງສຸດ
ຫ້ອງການ

**ສົມບູນ ລາດສະບົວສີ**

+ ກິດຈະກຳການຈັດກອງປະຊຸມສຳມະນາໃນການແກ້ໄຂບັນດາບັນຫາຕ່າງໆ ທີ່ບໍ່ເປັນເອກະພາບກັນລະຫ່ວາງ ອົງການໄອຍະການ ແລະ ເຈົ້າໜ້າທີ່ອົງການສືບສວນ-ສອບສວນ.

+ ກິດຈະກຳແນະນຳດ້ານວິຊາການການຕິດຕາມກວດກາອົງການສືບສວນ-ສອບສວນ ໃນການແກ້ໄຂຄະດີຂັ້ນລົບລ້າງ ແລະ ຂັ້ນຮື້ຟື້ນ ໃຫ້ແກ່ຜູ້ປະຕິບັດວຽກງານຕົວຈິງ.

1.2.2. ອົງການໄອຍະການທະຫານຂັ້ນສູງ, ອົງການໄອຍະການປະຊາຊົນຂັ້ນອຸທອນບັນດາພາກ ຕ້ອງສ້າງໂຄງການຕິດຕາມກວດກາອົງການສືບສວນ-ສອບສວນ ໂດຍເລັ່ງໜັກໃສ່ກິດຈະກຳດັ່ງນີ້ :

+ ກິດຈະກຳຈັດກອງປະຊຸມສຳມະນາກັບພາກສ່ວນທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາທີ່ບໍ່ເປັນເອກະພາບກັນ.

+ ກິດຈະກຳສ້າງຄຳແນະນຳວິຊາການ ດ້ານການກວດກາອົງການສືບສວນ-ສອບສວນ ໃນການດຳເນີນຄະດີຂັ້ນອຸທອນ.

+ ກິດຈະກຳການລົງຊ່ວຍດ້ານວິຊາການ ໃຫ້ແກ່ອົງການໄອຍະການປະຊາຊົນຂັ້ນແຂວງ ທີ່ຂຶ້ນກັບຕົນຮັບຜິດຊອບ.

1.2.3. ອົງການໄອຍະການປະຊາຊົນນະຄອນຫຼວງ, ບັນດາແຂວງ, ກອງພົນ, ກອງບັນຊາການທະຫານແຂວງ ໃຫ້ສ້າງໂຄງການຕິດຕາມກວດກາອົງການສືບສວນ-ສອບສວນ ໂດຍເລັ່ງໃສ່ບັນດາກິດຈະກຳດັ່ງນີ້ :

+ ກິດຈະກຳການດຳເນີນການກວດກາອົງການສືບສວນ-ສອບສວນແຕ່ທົ່ວທີ, ໂດຍສະເພາະແມ່ນການປະຕິບັດລະບອບປະຈຳການ 24 ຊົ່ວໂມງ ເພື່ອຮູ້ໄດ້ສະພາບການເກີດຂຶ້ນຂອງຄະດີແຕ່ທົ່ວທີ.

+ ກິດຈະກຳການຈັດກອງປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ໃນການແກ້ໄຂບັນດາບັນຫາທີ່ບໍ່ເປັນເອກະພາບກັນ.

+ ກິດຈະກຳການຈັດກອງປະຊຸມຖອດຖອນບົດຮຽນ ໃນການຕິດຕາມກວດກາອົງການສືບສວນ-ສອບສວນ.

**1.3. <u>ໂຄງການທີ 3 : ໂຄງການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ແລະ ຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ</u>**

ໂຄງການນີ້ຈະໄດ້ແບ່ງອອກເປັນ 2 ໂຄງການຍ່ອຍຄື :

**1.3.1. <u>ໂຄງການຕິດຕາມກວດກາການປະຕິບັດກົດໝາຍຢູ່ໃນການດຳເນີນຄະດີຢູ່ສານ</u>**

ພາກສ່ວນກ່ຽວຂ້ອງທີ່ຈະໄດ້ດຳເນີນການກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານລວມມີ :

- ກົມກວດກາຄະດີອາຍາ ແລະ ກົມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ.

- ພະແນກກວດກາຄະດີອາຍາ ແລະ ພະແນກກວດກາຄະດີແພ່ງ ຂອງອົງການໄອຍະການທະຫານຂັ້ນສູງ ແລະ ອົງການໄອຍະການປະຊາຊົນຂັ້ນອຸທອນບັນດາພາກ.

- ຂະແໜງກວດກາຄະດີອາຍາ ແລະ ຂະແໜງກວດກາຄະດີແພ່ງ ຂອງອົງການໄອຍະການປະຊາຊົນຂັ້ນແຂວງ, ນະຄອນຫຼວງ, ກອງພົນ, ກອງພັນໃຫ່ຍ, ກອງບັນຊາການທະຫານແຂວງ.

ບັນດາພາກສ່ວນດັ່ງກ່າວເທິງນີ້ ຕ້ອງໄດ້ສ້າງໂຄງການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ໂດຍມີກິດຈະກຳທີ່ແທດເໝາະກັບຕົວຈິງຄື :

1- ກົມກວດກາຄະດີອາຍາ ແລະ ກົມກວດກາຄະດີແພ່ງ ຂອງອົງການໄອຍະການປະຊາຊົນສູງສຸດ ຕ້ອງສ້າງໂຄງການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ທີ່ມີບັນດາກິດຈະກຳຄື:

+ ກິດຈະກຳການອອກນິຕິກຳ ຫຼື ຄຳແນະນຳໃນການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ໂດຍແຍກເປັນຄະດີອາຍາ ແລະ ຄະດີແພ່ງ.

+ ກິດຈະກຳການຈັດກອງປະຊຸມສຳມະນາໃນການແກ້ໄຂບັນດາບັນຫາຕ່າງໆ ທີ່ບໍ່ເປັນເອກະພາບກັນລະຫ່ວາງ ອົງການໄອຍະການ ແລະ ພາກສ່ວນທີ່ກ່ຽວຂ້ອງ.

+ ກິດຈະກຳແນະນຳດ້ານວິຊາການ ການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ໃນບັນດາຄະດີຂັ້ນລົບລ້າງ ແລະ ຂັ້ນຮື້ຟື້ນ ໃຫ້ແກ່ຜູ້ປະຕິບັດວຽກງານຕົວຈິງ.

+ ກິດຈະກຳລົງກວດກາເກັບກຳຂໍ້ມູນ ແລະ ກວດກາການປະຕິບັດວຽກງານ ຂອງອົງການໄອຍະການປະຊາຊົນທ້ອງຖິ່ນ.

2- ອົງການໄອຍະການທະຫານຂັ້ນສູງ, ອົງການໄອຍະການປະຊາຊົນຂັ້ນອຸທອນບັນດາພາກຕ້ອງສ້າງໂຄງການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ໂດຍເລັ່ງໜັກໃສ່ກິດຈະກຳດັ່ງນີ້ :

+ ກິດຈະກຳຈັດກອງປະຊຸມສຳມະນາກັບພາກສ່ວນທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາທີ່ບໍ່ເປັນເອກະພາບກັນ.

+ ກິດຈະກຳການຈັດການແນະນຳດ້ານວິຊາການ ການກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ໃນບັນດາຄະດີຂັ້ນອຸທອນ.

+ ກິດຈະກຳການລົງຊ່ວຍດ້ານວິຊາການ ໃຫ້ແກ່ອົງການໄອຍະການປະຊາຊົນຂັ້ນແຂວງ, ນະຄອນຫຼວງທີ່ຂື້ນກັບຕົນຮັບຜິດຊອບ.

3- ອົງການໄອຍະການປະຊາຊົນນະຄອນຫຼວງ, ບັນດາແຂວງ, ກອງພົນ, ກອງບັນຊາການທະຫານແຂວງ ໃຫ້ສ້າງໂຄງການຕິດຕາມກວດກາ ການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ໂດຍເລັ່ງໃສ່ບັນດາກິດຈະກຳດັ່ງນີ້ :

+ ກິດຈະກຳການດຳເນີນການກວດກາ ການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານໃນຄະດີຂັ້ນຕົ້ນ ຫຼື ຄະດີຂັ້ນອຸທອນ ທີ່ສານຂັ້ນຕົ້ນເມືອງຕັດສິນແຕ່ຄູ່ຄວາມອຸທອນຂື້ນຂັ້ນແຂວງ.

+ ກິດຈະກຳການຈັດກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງ ໃນການແກ້ໄຂບັນດາບັນຫາທີ່ບໍ່ເປັນເອກະພາບກັນ.